ແຜນການສອນ

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 11 ກໍຣະກະດາ 2010 (07-11-2010)

**<u>ພລັງຂອງຄວາມກ້າຫານ</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>:** (1 ຊາມູເອນ 17:8-11, 32-39, 45-47)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>**

ບົດຮຽນນີ້ກ່ຽວກັບເຣື່ອງຄວາມກ້າຫານຂອງດາວິດ ທີ່ຕໍ່ສູ້ກັບ ໂກລີອາດ ທີ່ລ້ອມລາວ ລາວບໍ່ມີຄວາມຢ້ານກົວແຕ່ຢ່າງໃດເລີຍ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:</u>**

ຄົນທີ່ເປັນຜູ້ໃຫຍ່ແລ້ວ ຕ້ອງເຂົ້າໃຈວ່າພວກເຂົາເຈົ້າ ສາມາດໄວ້ວາງໃຈໃນພຣະເຈົ້າສເມີ ໃນຂະນະທີ່ພວກເຂົາເຈົ້າເບິ່ງເໝືອນກັບວ່າບໍ່ມີກຳລັງ ພໍທີ່ຈະປະເຊີນກັບບັນຫາໃຫຍ່ໆ. ຄົນທີ່ເປັນຜູ້ໃຫຍ່ແລ້ວໃນທຸກມື້ນີ້ ແມ່ນມີຄວາມຮູ້ສຶກຢ້ານກົວ ແລະຂາດຄວາມກ້າຫານ ໃນການທີ່ຈະປະເຊີນໜ້າກັບ ຄວາມບໍ່ຖືກຕ້ອງໃນຊີວິດປະຈຳວັນ ພວກເຂົາເຈົ້າຄວນຈື່ໄວ້ວ່າ ພຣະເຈົ້າຊົງໃຫ້ຄວາມກ້າຫານ ກັບເຂົາເຈົ້າພໍທີ່ຈະປະເຊີນກັບທຸກໆ ບັນຫາໄດ້.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**

ບົດຮຽນນີ້ ຈະຊ່ອຍໃຫ້ທ່ານຄົ້ນພົບວ່າຄວາມກ້າຫານ ທີ່ພຣະເຈົ້າປະທານໃຫ້ ເມື່ອທ່ານປະເຊີນກັບບັນຫາໃນເວລານີ້ ຫລືໃນອະນາຄົດຂ້າງໜ້າ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ຜູ້ໃດໃນສັງຄົມຂອງພວກເຮົາປະຈຸບັນທີ່ພວກເຮົາຄວນສນັບສນູນ
- ມັນເປັນລະຍະເວລາ 50 ຫລື 100 ປີຜ່ານມາແລ້ວ ການສນັບສນູນທີ່ຍາກທີ່ສຸດນັ້ນຄືແນວໃດ?
- ທ່ານສາມາດເວົ້າວ່າຜູ້ທີ່ເປັນຜູ້ໃຫຍ່ແລ້ວໃນສມັຍນີ້ມີຄວາມຢ້ານກົວຫລາຍ ແລະກໍຍາກທີ່ຈະໜູນໃຈແລ້ວທ່ານຈະເຮັດແນວໃດ?
- ໂລກໄດ້ມີການຮົບລາຂ້າຟັນກັນ ມັນເຮັດໃຫ້ພວກເຮົາຢ້ານກົວຕໍ່ການປົກປັກຮັກສາເຫດການຢ່າງນີ້

ແນວໃດແດ່?

## 1. ກ້າຫານທີ່ຈະຖ່ອມຕົວລົງ: (1 ຊາມູເອນ 17:8-11)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ 1 ຊາມູເອນ 17:8-11
- ເຫດຜົນອັນໃດທີ່ເຮັດໃຫ້ພວກອິສຣາເອນເສັຽຄວາມກ້າຫານ ບໍ່ກ້າສູ້ໜ້າໂກລີອາດ?
- ໃນຂໍ້ທີ 11 ຊາອູນ ແລະພວກທະຫານຂອງລາວມີຄວາມຢ້ານກົວ. ປຽບທຽບໃສ່ທາງຝ່າຍເນື້ອໜັງ ແລ້ວຊາອູນໄດ້ບັນລະຍາຍໄວ້ຊຶ່ງໄດ້ພົບຢູ່ 1 ຊາມູເອນ 9:2.
- ຄວາມຢ້ານກົວຂອງຊາອູນໄດ້ມີຜົນສະທ້ອນເຖິງຄົນອິສຣາເອນແນວໃດ?
- ແມ່ນຫຍັງທີ່ເຮັດໃຫ້ຊາອູນມີຄວາມຢ້ານກົວໂກລີອາດ?
- ໃນເມື່ອພວກເຮົາຖືກສັດຕຣູຂົ່ມຂູ່, ຈາກປະສົບການທີ່ຂອງພວກເຮົາທີ່ຜ່ານມາ ຈະມີຜົນກັບມາສູ່ພວກເຮົາຫລືບໍ່?
- ຮ່າງຍັກ (ຮ່າງໃຫຍ່) ຂອງໂກລີອາດໄດ້ທ້າທາຍໃຫ້ທ່ານມີຄວາມຢ້ານກົວຢູ່ບໍ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (1 ຊາມູເອນ 17:8-11)

1. ຊາອູນຄວນຈະໃຫ້ຄວາມຢ້ານກົວຂອງລາວເຂົ້າໃກ້ຊິດພຣະເຈົ້າໂດຍທາງໃດ?
2. ພວກເຮົາຄວນຈະເຮັດຢ່າງໃດ ໃນເມື່ອພວກເຮົາປະເຊີນກັບບັນຫາການຂົ່ມຂູ່?
3. ຜູ້ນຳ ແລະຜູ້ມີອຳນາດໃນຊີວິດຂອງພວກເຮົາໄດ້ມີຜົນຕໍ່ເຮົາ ແລ້ວພວກເຮົາຄວນຈະຕອບສນອງແນວໃດ?
4. ແມ່ນໃຜທີ່ຢູ່ໃກ້ຊິດທ່ານ, ຄອບຄົວ, ໝູ່ເພື່ອນ ທີ່ຢູ່ຝ່າຍທ່ານໃນເວລາທ່ານມີຄວາມຢ້ານກົວ?
5. ໃນເມື່ອເປັນຢ່າງນັ້ນແລ້ວ ພວກເຮົາຄວນປ່ຽນແປງໃນຄວາມສັມພັນຈອງພວກເຮົາແນວໃດ?

## 2. ກ້າຫານທີ່ຈະເປີດເຜີຍ: (1 ຊາມູເອນ 17:32-39)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ 1 ຊາມູເອນ 17:32-39
- ເຫດຜົນແນວໃດທີ່ຊາອູນໃຫ້ດາວິດ ໃນການສັ່ງໃຫ້ດາວິດຢ້ານໂກລີອາດ? ດາວິດໄດ້ຕອບວ່າແນວໃດ?
- ຊາອູນໄດ້ຈິດຈໍ່ໃສ່ໃນຜູ້ໃດ? (ໂກລີອາດ) ແຕ່ດາວິດໄດ້ອ້າງ ແລະຈິດຈໍ່ໃສ່ໃນຜູ້ໃດ? (ພຣະເຈົ້າເປັນຜູ້ໃຫ້ພລັງແກ່ດາວິດ ແລະທີ່ຜ່ານມາດາວິດໄດ້ມີປະສົບການກັບພຣະເຈົ້າ)
- ຊຶ່ງຜູ້ທີ່ເຊື່ອທັງຫລາຍໄດ້ຈະເຣີນເຕີບໂຕແລ້ວກໍຕາມ, ບາງຄັ້ງກໍຄິດວ່າພວກເຮົາບໍ່ຢາກຮຽນຈາກຄຣິສຕຽນໃໝ່ຫລືຈາກຜູ້ທີ່ເຊື່ອຄົນອື່ນໆ.
  ໃຫ້ນັກຮຽນເປີດໄປຫາ Chart“ດາວິດ ແລະຊາອູນ” ແລະຕັ້ງຄຳຖາມຂຶ້ນມາສົນທະນາກັນ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 1 ຊາມູເອນ 17:32-39

1. ໃນການເປັນພຍານປະສົບການຫຍັງແດ່ທີ່ດາວິດຈື່ໄດ້ ແລະເຮັດໃຫ້ລາວໄວ້ວາງໃຈໃນອົງພຣະເຈົ້າຢ່າງສຸດຈິດສຸດໃຈ ແລະສັດຊື່ຢ່າງໝັ້ນຄົງ?
2. ທິດທາງຂອງທ່ານໃນການເປັນພຍານໃນການໄວ້ວາງໃຈໃນພຣະເຈົ້ານັ້ນແມ່ນຫຍັງ?
3. ໃນເມື່ອການຫລອກລວງເຂົ້າມາຫາ, ພວກເຮົາຈະຕັ້ງໝັ້ນຄົງຢູ່ໃນພຣະເຈົ້າໂດຍຄວາມເຊື່ອໄດ້ຢ່າງໃດ?

3 . **ກ້າຫານໃນການສະແດງອອກ:** (1 ຊາມູເອນ 17:45-47)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ຊາມູເອນ 17:45-47
- ແມ່ນຫຍັງທີ່ເຮັດໃຫ້ດາວິດສາມາດມອງເຫັນທິດທາງຝ່າຍເນື້ອໜັງທີ່ຜ່ານມາທາງໂກລີອາດທີ່ໄດ້ທຳ?
- ໃນທາງໃດທີ່ພວກເຮົາສາມາດເລີ້ມຕົ້ນມອງເຫັນລະຍະເວລາທາງຝ່າຍໂລກທີ່ໂກລີອາດໄດ້ກະທຳ?
- ສົນທະນາເຖິງພື້ນຖານແຫ່ງຄວາມຢ້ານກົວທີ່ສຸດທີ່ພວກເຮົາເຄີຍໄດ້ປະເຊີນເຊັ່ນ: ການງານໃນຄອບຄົວ, ການເງິນ, ແລະສຸຂພາບ.
- ບອກໃຫ້ນັກຮຽນຮູ້ເຖິງເຣື່ອງດາວິດທີ່ໄດ້ຈິດຈໍ່ ໄວ້ວາງໃຈໃນພຣະເຈົ້າ ແລະເຊື່ອໃນພລັງອຳນາດຂອງພຣະອົງ ແລະຊ່ອຍເຂົາເຈົ້າໃຫ້ຊອກສແວງຫາທາງດຽວກັນກັບດາວິດ. ຕົວຢ່າງ: “ຟີລິດ”, ຂ້າພະເຈົ້າເຂົ້າໃຈບັນຫາຂອງທ່ານອາຈມີຜົນກັບມາທຸກນາທີໄດ້ທຸກວັນ. ຫ້ອງຮຽນ, ມີບາງຄຳທີ່ຟີລິດສາມາດໃຊ້ໃນການໜູນໃຈລາວໃຫ້ເຊື່ອໝັ້ນໃນພຣະເຈົ້າ.
- ໃນຄຳເວົ້າທີ່ດາວິດໄດ້ເວົ້າໃສ່ໂກລີອາດ, ແມ່ນປໂຍກໃດທີ່ລາວໃຊ້ໃນການສະແດງເຖິງຄວາມເຂັ້ມແຂງຫລືໃນການສູ້ຮົບທີ່ຕຽມພ້ອມ?
- ໃຫ້ພິມຂໍ້ຄວາມເວົ້າຂອງດາວິດໃນ 1 ຊາມູເອນ17:45-47 ໃຫ້ນັກຮຽນ, ສ່ວນທີ່ເຫລືອນັ້ນປະໃຫ້ເປົ່າຫວ່າງໄວ້ ເພື່ອເປັນຄຸນນະສົມບັດຕຳແໜ່ງຖານະຂອງດາວິດ.
- ເມື່ອພວກເຮົາເຂົ້າໃຈວ່າພຣະເຈົ້ານັ້ນເປັນຜູ້ໃດ, ນັ້ນຄືຄຳເວົ້າເກົ່າໆ: ພວກເຮົາໄດ້ຄົ້ນພົບວ່າ ພຣະອົງເປັນຜູ້ທີ່ພວກເຮົາຕ້ອງການໃນທຸກສິ່ງທຸກຢ່າງ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 1 ຊາມູເອນ 17:45-47

1. ແມ່ນຫຍັງທີ່ພວກເຮົາຄວນສະແດງໃຫ້ຄົນທີ່ຢູ່ອ້ອມຮອບພວກເຮົາ, ເມື່ອໃດພວກເຮົາຈຶ່ງຈະລຸກຂຶ້ນ ໃຫ້ການທ້າທາຍໃນພຣະເຈົ້າໃຫ້ມີຄວາມເຂັ້ມແຂງຂຶ້ນ?
2. ໃຜຈະສະແດງເຖິງການທີ່ເຂົາເຈົ້າໄດ້ປະເຊີນໜ້າກັບຜູ້ທີ່ມີຮູບຮ່າງໃຫຍ່ເໝືອນໂກລີອາດໄດ້? ຄວາມເຊື່ອຂອງທ່ານມີຄວາມເຂັ້ມແຂງໂດຍການໄວ້ວາງໃຈໃນພຣະເຈົ້າ?

## ພຣະຄັມພີແຫ່ງຄວາມຈິງ

- ໃນການພົບກັບການທ້າທາຍຢ່າງລົ້ນເຫລືອ,ຈົ່ງມອງແລະຈິດຈໍ່ໃສ່ທີ່ພຣະເຈົ້າ ແລະທາງທີ່ທ່ານຈາກບັນຫາຂອງທ່ານ.
- ໃນເມື່ອຜູ້ນຳມີຄວາມເຊື່ອລົດນ້ອຍຖອຍລົງ, ຄວາມເຊື່ອອື່ນໆກໍ່ແອບແຝງເຂົ້າມາເຮັດໃຫ້ອິດເມື່ອຍ.
- ຮັບເອົາການໜູນໃຈເປັນຫລັກ ຈະຊ່ອຍສນັບສນູນຄົນອື່ນໆ ໃຫ້ທຳໂດຍຄວາມສລຽວສລາດ.
- ໃນເມື່ອທ່ານຫາກເຊື່ອໄວ້ວາງໃຈໃນພຣະເຈົ້າ ຈະໃຫ້ທ່ານຈະເຣີນຂຶ້ນຫລາຍກວ່າທ່ານໄວ້ວາງໃຈໃນຕົນເອງ.
- ພຣະເຈົ້າຊົງໃຊ້ຜູ້ທີ່ສະແດງຄວາມຈິງໃຈເຊື່ອໃຫ້ໜູນຈິດໃຈຄົນອື່ນໆ ໃຫ້ຈະເຣີນຂຶ້ນທາງດ້ານຄວາມເຊື່ອ.